**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ**

## ຜ-ຟຟລ ໃຫ້ການອຸປະຖໍາອາຄານຮຽນຫຼັງໃໝ່ໂຮງຮຽນປະຖົມສົມບູນສຶກສາແສງສະຫວ່າງ ເມືອງແກ້ວອຸດົມ, ແຂວງວຽງຈັນ ຄັ້ງວັນທີ 26/12/2016

ວັນທີ 26 ເດືອນ ທັນວາ 2016, ຜ-ຟຟລ ໂດຍຮ່ວມກັບ ທ່ານ ສົມບູນ ເນຕິບັນດິດ ແລະ ທ່ານ ວັນໄຊ ເນຕິບັນດິດ ໄດ້ຈັດພິທີມອບ-ຮັບ ອາຄານຮຽນຫຼັງໃໝ່ໂຮງຮຽນ ປະຖົມສົມບູນສຶກສາແສງສະຫວ່າງ, ເມືອງແກ້ວອຸດົມ ແຂວງວຽງຈັນ, ໃຫ້ກັບອໍານາດການປົກຄອງແຂວງວຽງຈັນ. ໂຮງຮຽນຫຼັງດັ່ງກ່າວນີ້ແມ່ນການປະກອບສ່ວນທຶນຮອນຂອງ ສາມພາກສ່ວນ ຊຶ່ງລວມມີ: ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ມູນຄ່າ 150.000.000 ກີບ, ທ່ານ ສົມບູນ ເນຕິບັນດິດ ມູນຄ່າ 163.990.000 ກີບ ແລະ ທ່ານ ວັນໄຊ ເນຕິບັນດິດ ມູນຄ່າ 163.990.000 ກີບ ລວມທັງໝົດ ແມ່ນ: 477.980.000 ກີບ, ຊຶ່ງການປະກອບສ່ວນໃນຄັ້ງນີ້ ກໍ່ແມ່ນໜຶ່ງໃນຫຼາຍໆກິດຈະກໍາຂອງການຊ່ວຍເຫຼືອສັງຄົມ ທີ່ທາງບໍລິສັດໄດ້ປະຕິບັດຢ່າງຕໍ່ເນື່ອງ ໂດຍສະເພາະ ແມ່ນການໃຫ້ການສະໜັບສະໜູນດ້ານການສຶກສາໃຫ້ແກ່ລູກຫຼານ ໃຫ້ມີຄວາມສະດວກ, ສະບາຍ ແລະ ໄດ້ຮັບໂອກາດໃນການພັດທະນາທີ່ດີຂຶ້ນເທື່ອລະກ້າວ. ນອກນີ້ ຍັງເປັນການປະກອບສ່ວນໃຫ້ກັບ ພັກ ແລະ ລັດຖະບານ ໃນການສົ່ງເສີມວຽກງານການສຶກສາ ໃຫ້ຖ່ວງທັນຕໍ່ຄວາມຮຽກຮ້ອງຕ້ອງການໃນການຂະຫຍາຍຕົວຂອງວຽກງານພັດທະນາຂະແໜງການສຶກສາ ເວົ້າສະເພາະ, ກໍ່ຄືບ້ານ ແສງສະຫວ່າງ, ເມືອງແກ້ວອຸດົມຂອງພວກເຮົາ ທີ່ມີຈໍານວນ ລູກ ຫຼານ ນັກຮຽນ ເພີ່ມຂຶ້ນຫຼາຍເທົ່າໂຕໃນປະຈຸບັນ.

ຖະໜົນ ມິດຕະພາບ ລາວ-ໄທ, ບ້ານ ທົ່ງກາງ, ເມືອງ ສີສັດຕະນາກ, ຕູ້ ປ.ນ. 2392, ນະຄອນຫຼວງວຽງຈັນ ໂທລະສັບ (856-21) 316142 ແຟກ (856-21) 316141; ອີເມລ: edlgenhq@edlgen.com.la; ເວັບໄຊທ: www.edlgen.com.la